**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງການເງິນ**

**ຫ້ອງການ** **ເລກທີ** 3149 **/ຫກ**

**ນະຄອນຫຼວງວຽງຈັນ, ວັນທີ** 14 ຕຸລາ 2025

# ແຈ້ງການປະມູນ

**ເຖິງ :** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆ

**ເລື່ອງ :** ການປະມູນເຊົ່າຊື້ຊັບສິນບັດ ແລະ ສຳປະທານທີ່ດິນຂອງລັດ (ໂຮງແຮມແມ່ຂອງ).

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ເລກທີ 18/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງການເງິນ ສະບັບເລກທີ 2670/ກງ, ລົງວັນທີ 22 ສິງຫາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປະມູນເຊົ່າຊື້ຊັບສິນບັດ ແລະ ສຳປະທານທີ່ດິນຂອງລັດ (ໂຮງແຮມແມ່ຂອງ) ສະບັບເລກທີ 2042/ກງ, ລົງວັນທີ 03 ກໍລະກົດ 2025;
- ອີງຕາມໜັງສືສະເໜີຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 6894/ຄຊລ, ລົງວັນທີ 03 ຕຸລາ 2025;

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນເຊົ່າຊື້ຊັບສິນບັດ ແລະ ສຳປະທານທີ່ດິນຂອງລັດ (ໂຮງແຮມແມ່ຂອງ) ດ້ວຍຮູບການປະມູນແບບເປີດກວ້າງ, ຫາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆ ມີຄວາມສົນໃຈຢາກເຂົ້າຮ່ວມປະມູນແຂ່ງຂັນລາຄາ ໃຫ້ຕິດຕໍ່ພົວພັນລາຍລະອຽດ ແລະ ຊື້ຊອງປະມູນໄດ້ທີ່ພະແນກຄຸ້ມຄອງອະສັງຫາລິມະຊັບ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ, ການຂາຍຊອງປະມູນແມ່ນເລີ່ມແຕ່ວັນທີ **15 ຕຸລາ 2025** ຫາ ວັນທີ **14 ພະຈິກ 2025**, (ໃນວັນ ແລະ ເວລາລັດຖະການ) ໂດຍສາມາດເບິ່ງສະຖານຕົວຈິງໄດ້ ໃນວັນທີ **12 ພະຈິກ 2025**, ລາຄາຂາຍຊອງປະມູນ **10,000,000 ກີບ/ຊອງ**, ຜູ້ເຂົ້າຮ່ວມປະມູນຕ້ອງວາງເງິນຄໍ້າປະກັນຊອງປະມູນ 15% ຂອງມູນຄ່າສະເໜີ ແລະ ຈະໄດ້ເປີດຊອງປະມູນໂດຍຊ່ອງໜ້າຄະນະກຳມະ ການປະມູນ ແລະ ຜູ້ເຂົ້າຮ່ວມປະມູນ ໃນວັນທີ **24 ພະຈິກ 2025** ເວລາ **9:00** ໂມງ, ທີ່ຫ້ອງປະຊຸມກະຊວງການເງິນ ຊັ້ນ **01** (ຕຶກກົມສ່ວຍສາອາກອນ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈໃນການເຂົ້າຮ່ວມປະມູນຊາບ.

**ຫົວໜ້າຫ້ອງການ**

ກະຊວງການເງິນ

ຫ້ອງການ

ວິໄລພອນ ປຸ້ຍດວງແກ້ວ

*ເບີໂທຕິດຕໍ່ພົວພັນ: 020 2223 5538*

ສະແກນດ້ວຍ CamScanner